ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 22 ຫາ 26 ພຶດສະພາ 2023




ປາກຫວານພານສະຖານທີ່ທ່ອງທ່ຽວຕິດພັນກັບການຜະລິດກະສິກຳສະອາດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ປາຫວານຟາມສະຖານທີ່ທ່ອງທ່ຽວ ຕິດພັນກັບການຜະລິດກະສິກຳສະອາດ

**ຂຽນໂດຍ: ນິກຮຽນບິນ**

ປາຫວານຟາມເປັນອີກໜຶ່ງສະຖານທີ່ທ່ອງທ່ຽວທີ່ຕິດພັນກັບການຜະລິດກະສິກຳປະເພດພືດໃຫ້ໃບ ແລະ ໃຫ້ໝາກ ໂດຍສະເພາະໝາກແຕງເມລ້ອນ ແລະ ຜັກສະຫຼັດ, ໝາກເຜັດຫວານ, ໝາກແຕງຍາວຍີ່ປຸ່ນ ແລະ ພືດສະໝຸນໄພຕ່າງປະເທດຈຳນວນໜຶ່ງ ເຊິ່ງພາຍໃນຟາມນອກຈາກມີເຮືອນຮົ່ມປູກພືດຜັກແລ້ວຍັງມີຮ້ານອາຫານທີ່ມີການຕົບແຕ່ງຢ່າງສວຍງາມ ໄວ້ໃຫ້ຜູ້ທີ່ທ່ຽວຊົມໄດ້ພັກຜ່ອນ ມີຕູບແຄມໜອງນ້ຳໃຫ້ບໍລິການ ຄຽງຄູ່ກັນນັ້ນຍັງມີສັດຈຳນວນໜຶ່ງໃຫ້ທ່ຽວຊົມ ພິເສດສະຖານທີ່ແຫ່ງນີ້ບໍ່ໄກຈາກນະຄອນຫຼວງວຽງຈັນ ຕັ້ງຢູ່ບ້ານ ນາລ້ອມ ເມືອງໄຊທານີ ນະຄອນຫຼວງວຽງຈັນ.

ທ່ານ ນາງ ວຽງສະຫວັນ ຄຳມະນີວົງ ຜູ້ອຳນວຍການບໍລິສັດປາຫວານຟາມ ຈຳກັດ ໃຫ້ສຳພາດວ່າ: ປາຫວານຟາມ ໄດ້ຜະລິດກະສິກຳສະອາດມາແຕ່ປີ 2016 ເປັນຕົ້ນມາ ໂດຍການລິເລີ່ມຂອງຟາມໃນເມື່ອກ່ອນແມ່ນໄດ້ປູກໝາກແຕງເມລ້ອນ ຢູ່ບ້ານໂຊກໃຫຍ່, ເມືອງໄຊເສດຖາ ,ນະຄອນຫຼວງວຽງຈັນ ເຫັນວ່າໄດ້ຮັບຄວາມສົນໃຈຈາກສັງຄົມເປັນຢ່າງດີ ສະແດງອອກມີລູກຄ້າຈຳນວນຫຼາຍເຂົ້າໄປທ່ຽວຊົມ ທັດສະນະ ແລະ ສຶກສາຮຽນຮູ້ ກ່ຽວວິຊາການປູກ ການບົວລະບັດຮັກສາຈົນຮອດການເກັບກ່ຽວ ພ້ອມນັ້ນຕະຫຼາດຍັງມີຄວາມຕ້ອງການຜົນຜະລິດຈາກຟາມເປັນຈຳນວນຫຼວງຫຼາຍ ແຕ່ເນື່ອງຈາກ





ວ່າສະຖານທີ່ຟາມແຄບບໍ່ສາມາດຮອງຮັບລູກຄ້າ ຟາມຈຶ່ງມີຄວາມຈຳເປັນຕ້ອງຂະຫຍາຍເນື້ອທີ່ປູກໃໝ່ ພ້ອມທັງປູກພືດຊະນິດຕ່າງໆໃຫ້ມີຫຼາກຫຼາຍຜະລິດຕະພັນ ເຊັ່ນ: ໝາກເລັ່ນນ້ອຍແດງ, ຜັກສະຫຼັດ ໝາກເຜັດຫວານ, ໝາກແຕງຍາວຍີ່ປຸ່ນ ແລະ ພືດສະໝຸນໄພຕ່າງປະເທດຈຳນວນໜຶ່ງ.

ສະຖານທີ່ປາຫວານຟາມແຫ່ງໃໝ່ນີ້ຕັ້ງຢູ່ບ້ານ ນາລ້ອມ ເມືອງ ໄຊທານີ ນະຄອນຫຼວງວຽງຈັນ ໂດຍໄດ້ເລີ່ມບຸກເບີກປັບປຸງພື້ນຖານໂຄງລ່າງມາແຕ່ເດືອນພຶດສະພາ 2020 ເປັນຕົ້ນມາ ໃນເນື້ອທີ 2 ເຮັກຕາ ໃນເບື້ອງຕົ້ນໄດ້ປຸກສ້າງເຮືອນຮົ່ມ 20 ໂຮງເຮືອນ ສຳລັບປູກພືດຜັກຂອງສຟາມ ເຊິ່ງໄດ້ໃຊ້ເຕັກນິກວິທີການປູກທີ່ທັນສະໄໝ ມີລະບົບການຜະລິດໄດ້ມາດຕະຖານ ກະສິກຳອິນຊີ ແລະ ກະສິກຳທີ່ດີ ຕາມສູນມາດຕະຖານກະສິກຳ ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ວາງອອກ ຫົວໃຈຫຼັກແມ່ນແນ່ໃສ່ຮັບປະກັນຄວາມປອດໄພຕໍ່ຜູ້ບໍລິໂພກໃຫ້ມີຜົນຜະລິດພືດຜັກໝາກໄມ້ທີ່ແຊບປອດໄພ ແລະ ຜູ້ປູກກໍ່ໃຫ້ມີສຸຂະພາບແຂງແຮງບໍ່ໃຫ້ມີຜົນກະທົບຈາກການໃຊ້ສານເຄມີທີ່ບໍ່ຖືກຕ້ອງ.

ມາຮອດປັດຈຸບັນ ພາຍໃນຟາມໄດ້ມີເຮືອນຮົ່ມທັງໝົດ 31 ໂຮງເຮືອນ ໃນນີ້ປູກໝາກແຕງເມລ້ອນ 5 ສາຍພັນ ຈຳນວນ 10 ໂຮງເຮືອນ ໃນນີ້ 1 ໂຮງເຮືອນສາມາດປູກໄດ້ 700 ຕົ້ນ ເຊິ່ງຈະໃຊ້ເວລາປະມານ 75-80 ວັນ ຈຶ່ງສາມາດເກັບຜົນຜະລິດອອກຈຳໜ່າຍໄດ້ ອາຍຸເກັບກ່ຽວແມ່ນຂຶ້ນກັບແຕ່ລະສາຍພັນ ມີລາຄາຈຳໜ່າຍ 48.000 ກີບຕໍ່ກິໂລກຼາມ ນອກນັ້ນຍັງໄດ້ປູກໝາກໂມ, ຜັກສະຫຼັດ, ໝາກອຶຍີ່ປຸ່ນ,

ໝາກແຕງຍາວ ແລະ ພືດຊະນິດອື່ນໆອອກຈຳໜ່າຍ ໂດຍທາງຟາມຈະສົ່ງໃຫ້ສູນການຄ້າພາກຊັນ ວິວ ມໍ ສະກາຍມາເກັດ ຕະຫຼາດປອດສານພິດລາວ-ໄອເຕັກ ຢູ່ໜ້າຟາມ ແລະ ຂາຍສົ່ງໃຫ້ພໍ່ຄ້າແມ່ຄ້າຄົນກາງ, ພິເສດພາຍໃນຟາມໄດ້ປູກໝາກອາງຸ່ນ ທີ່ເປັນຜົນຜະລິດອັນໃໝ່ ກຳລັງໃກ້ຈະສຸກງາມ ພ້ອມໃຫ້ລູກຄ້າເຂົ້າມາຖ່າຍຮູບ ພ້ອມນັ້ນຍັງມີໂຊນສັດລ້ຽງ ມີຮ້ານກາເຟ ຕູບແຄມນ້ຳ ແລະ ຮ້ານອາຫານໄວ້ໃຫ້ບໍລິການລູກຄ້າ ແລະ ແຂກທີ່ມາຢ້ຽມຢາມສຶກສາ ເລີ່ມແຕ່ເວລາ 9:30-19:30 ໂມງຂອງທຸກໆວັນ ເຊິ່ງການເຂົ້າທ່ຽວຊົມຟາມແມ່ນບໍ່ໄດ້ເສຍຄ່າ.








**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ຫອມດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;